# ຄຳແນະນຳ



## ວິທີການລົງຄະແນນສຽງໂດຍໃຊ້ບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

**ທ່ານຈະຕ້ອງມີ:**

- ບັດລົງຄະແນນ *
- ຊອງຈົດໝາຍໃສ່ບັດລົງຄະແນນສຽງສີແທບ*
- ຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງ*
- ຊອງຈົດໝາຍລາຍເຊັນສີຂາວ*
- ຊອງຈົດໝາຍສົ່ງກັບຄືນສີຂາວຂະໜາດໃຫຍ່ກ່ວາ*
- ບິກສີດຳ
- ໃບຂັບຂີ່ຂອງລັດມິນນີໂຊຕາທີ່ມີທີ່ຢູ່ຂອງທ່ານ ຫຼືຫຼັກຖານສະແດງອະນຸຍາດອື່ນໆ ຂອງບ່ອນທີ່ທ່ານກຳລັງອາໄສຢູ່
  *ເບິ່ງອີກດ້ານໜຶ່ງສຳລັບການທາງເລືອກອື່ນໆ*

*ຖ້າທ່ານບໍ່ມີສິ່ງເຫຼົ່ານີ້, ກະລຸນາຕິດ

- ເລກປະຈຳຕົວຂອງທ່ານ
  ເລກໃບຂັບຂີ່ຂອງລັດມິນນີໂຊຕາ,
  ເລກບັດປະຈຳຕົວຂອງລັດມິນນີໂຊຕາ,
  ຫຼືເລກສີ່ໂຕສຸດທ້າຍຂອງບັດປະກັນສັງຄົມ
  *ເບິ່ງຂ້າງລຸ່ມນີ້ຖ້າຫາກວ່າທ່ານບໍ່ມີເລກໃດໆດັ່ງກ່າວ*
- ພະຍານ
  ຜູ້ໃດກໍໄດ້ທີ່ຈົດທະບຽນລົງຄະແນນສຽງໃນລັດ ມິນນີໂຊຕາ,
  ລວມທັງຄູ່ສົມລົດຫຼືຍາດພີ່ນ້ອງ ຂອງທ່ານ,
  ຫຼືໂນທາຣີ ພັບລິກ,
  ຫຼືບຸກຄົນທີ່ມີອຳນາດໃນການຮັບຄຳສາບານ

ສິ່ງສຳຄັນ: ທ່ານຕ້ອງໄດ້ສົ່ງຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງມານຳບັດລົງຄະແນນຂອງທ່ານ (ໃນຊອງຈົດໝາຍລາຍເຊັນສີຂາວ) ເພື່ອໃຫ້ຄະແນນສຽງຂອງທ່ານຖືກນັບ




### ❶ ກອກຂໍ້ມູນໃນຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງແລະເຊັນຊື່

- ສະແດງໃບຂັບຂີ່ຂອງທ່ານ ຫຼືຫຼັກຖານສະແດງອະນຸຍາດອື່ນໆ ຂອງບ່ອນທີ່ທ່ານກຳລັງຢູ່ອາໄສໃຫ້ພະຍານຂອງທ່ານເບິ່ງ
  *ເບິ່ງອີກດ້ານໜຶ່ງສຳລັບການທາງເລືອກອື່ນໆ*




### ❷ ລົງຄະແນນ!

- ສະແດງບັດລົງຄະແນນວ່າງເປົ່າໃຫ້ພະຍານ ຂອງທ່ານເບິ່ງ ແລ້ວເຮັດເຄື່ອງໝາຍລົງຄະແນນສຽງຂອງທ່ານໃນທີ່ສ່ວນຕົວ
- ປະຕິບັດຕາມຄຳແນະນຳຂຽນຢູ່ໃນບັດລົງຄະແນນ
- <u>ບໍ່ຕ້ອງ</u>ຂຽນຊື່ຫຼືໝາຍເລກບັດຂຳຕົວ ຂອງທ່ານໃນບັດລົງຄະແນນ
- <u>ຫ້າມ</u>ລົງຄະແນນສຽງໃຫ້ຜູ້ສະໝັກເກີນກ່ວາອະນຸຍາດ. *ຖ້າວ່າທ່ານເຮັດດັ່ງນັ້ນ, ຄະແນນສຽງ ຂອງທ່ານຈະບໍ່ຖືກນັບ*
  ***ເບິ່ງອີກດ້ານໜຶ່ງຖ້າຫາກວ່າທ່ານເຮັດຜິດພາດໃນບັດລົງຄະແນນຂອງທ່ານ***




### ❸ ໃສ່ບັດລົງຄະແນນຂອງທ່ານໃນຊອງຈົດໝາຍສີແທບແລ້ວປິດຊອງຈົດໝາຍ

- ບໍ່ຕ້ອງຂຽນຫຍັງໃສ່ຊອງນີ້

### ❹ ເອົາຊອງຈົດໝາຍສີແທບແລະຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງໃສ່ໃນ ຊອງໃນຊອງຈົດໝາຍລາຍເຊັນສີຂາວ




### ❺ ກອກຂໍ້ມູນໃນຊອງຈົດໝາຍລາຍເຊັນສີຂາວໃຫ້ສົມບູນ

- ຖ້າຫາກວ່າບໍ່ມີປ້າຍໜ້າຊອງ ໃຫ້ຂຽນຊື່ແລະທີ່ຢູ່ໃນລັດມິນນີໂຊຕາຂອງທ່ານໃສ່
- ຂຽນໝາຍເລກໃບຂັບຂີ່ຂອງລັດມິນນີໂຊຕາຂອງທ່ານ, ເລກບັດປະຈຳຕົວຂອງລັດມິນນີໂຊຕາ, ຫຼືເລກສີ່ໂຕສຸດທ້າຍຂອງບັດປະກັນສັງຄົມຂອງທ່ານ
  **ໃຫ້ແນ່ໃຈວ່າໃຊ້ເລກດຽວກັນກັບເລກທີ່ທ່ານໃຫ້ໄວ້ໃນຄຳຮ້ອງສະໝັກລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້**
  *ຖ້າຫາກວ່າທ່ານບໍ່ມີເລກໃດໆດັ່ງກ່າວ, ໃຫ້ເຮັດເຄື່ອງໝາຍໃນຫ້ອງນັ້ນ*
- ອ່ານແລະເຊັນສາບານ
- ຂໍໃຫ້ພະຍານຂອງທ່ານຂຽນຊື່ຂອງເຂົາເຈົ້າແລະທີ່ຢູ່ຖະໜົນໃນລັດມິນນີໂຊຕາລວມທັງເມືອງໃສ່ (ບໍ່ແມ່ນຕູ້ໄປສະນີ) ຊີ້ບອກດ້ວຍວ່າຫຼັກຖານສະແດງໃດທີ່ທ່ານສະແດງໃຫ້ພວກເຂົາເຈົ້າເຫັນ,ແລະເຊັນຊື່ຂອງເຂົາເຈົ້າ
  *ຖ້າຫາກວ່າພະຍານຂອງທ່ານເປັນ ພະນັກງານຫຼືໂນທາຣີ ພັບລິກ ແທນທີ່ຈະ ຂຽນທີ່ຢູ່ ເຂົາເຈົ້າຈະຕ້ອງຂຽນຕຳແໜ່ງຂອງເຂົາເຈົ້າໃສ່ ໂນທາຣີຍັງຕ້ອງໄດ້ຈ້ຳກາບັດ ຂອງເຂົາເຈົ້າ*
- ປິດຊອງຈົດໝາຍ




### ❻ ເອົາຊອງຈົດໝາຍລາຍເຊັນໃສ່ໃນຊອງຈົດໝາຍສົ່ງກັບຄືນສີຂາວຂະໜາດໃຫຍ່ກ່ວາ ເພື່ອປົກປັກຮັກສາຂໍ້ມູນສ່ວນຕົວຂອງທ່ານເພື່ອບໍ່ໃຫ້ສ່ອງເຫັນໄດ້

- ປິດຊອງຈົດໝາຍ




### ❼ ສົ່ງບັດລົງຄະແນນສຽງຂອງທ່ານກັບຄືນມາທີ່ <u>ທີ່ຢູ່ໃນຊອງຈົດໝາຍກ່ອນວັນເລືອກຕັ້ງ</u>

**ບັດລົງຄະແນນສຽງອາດຈະບໍ່ໄດ້ຮັບການສົ່ງຕໍ່ໄປສະຖານທີ່ນັບຄະແນນຂອງທ່ານ.**

ທ່ານມີສາມທາງເລືອກ:

- ສົ່ງມັນມາຮອດກ່ອນວັນເລືອກຕັ້ງໃຊ້ໄປສະນີສະຫະລັດ ຫຼືບໍລິການຈັດສົ່ງ,
- ນຳສົ່ງດ້ວຍໂຕເອງກ່ອນວັນເລືອກຕັ້ງຫຼືພາຍໃນບ່າຍ 3 ໂມງແລງວັນເລືອກຕັ້ງ,ຫຼື
- ຂໍໃຫ້ຜູ້ໃດນຳມາສົ່ງພາຍໃນບ່າຍ 3 ໂມງແລງວັນເລືອກຕັ້ງ
  *ບຸກຄົນຜູ້ນີ້ບໍ່ສາມາດນຳບັດລົງມາສົ່ງໃຫ້ຫຼາຍກ່ວາ 3 ບັດ.*




***ກວດສອບສະຖານະພາບບັດລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ ຂອງທ່ານໄດ້ທີ່* www.mnvotes.org**

# ທາງເລືອກສຳລັບຫຼັກຖານສະແດງບ່ອນທີ່ທ່ານຢູ່ອາໄສ

*ໃບຂັບຂີ່ຂອງລັດມິນນິໂຊຕາທີ່ຖືກຕ້ອງ, ບັດປະຈຳຕົວຂອງລັດມິນນິໂຊຕາ, ຫຼືໃບອະນຸຍາດທີ່ມີທີ່ຢູ່ປັດຈຸບັນຂອງທ່ານ*

*ຫຼື*

ບັດປະຈຳຕົວທີ່ມີຮູບພາບແຕ່ບໍ່ມີທີ່ຢູ່ປັດຈຸບັນຂອງທ່ານບຳມາພ້ອມກັບເອກກະສານທີ່ມີທີ່ທີ່ຢູ່ປັດຈຸບັນຂອງທ່ານ

- **ບັດປະຈຳຕົວທີ່ມີຮູບພາບທີ່ໃຊ້ໄດ້ :** ໃບຂັບຂີ່ຂອງລັດມິນນິໂຊຕາຫຼືຂອງລັດອື່ນ, ໃບອະນຸຍາດຂັບຂີ່ຊົ່ວຄາວ, ຫຼືບັດປະຈຳຕົວ; ພາສປອດອະເມລິກາ; ບັດປະຈຳຕົວທະຫານອະເມລິກາຫຼືບັດປະຈຳຕົວນັກຮົບເກົ່າ; ບັດປະຈຳຕົວນັກຮຽນມັດທະຍົມປາຍ/ບັດປະຈຳຕົວນັກສຶກສາວິທະຍາໄລ/ບັດປະຈຳຕົວນັກສຶກສາມະຫາວິທະຍາໄລຫຼືບັດປະຈຳຕົວຊົນເຜົ່າທີ່ມີລາຍເຊັນຂອງທ່ານ, ຈາກຊົນເຜົ່າທີ່ໄດ້ຮັບການຍອມຮັບຈາກສຳນັກງານກິດຈະການອິນເດຍ (ບີໄອເອ)
- **ເອກກະສານທີ່ມີທີ່ຢູ່ໃນປັດຈຸບັນຂອງທ່ານທີ່ໃຊ້ໄດ້ :** ໃບບິວຕົ້ນສະບັບ ລວມທັງໜັງສືແຈ້ງຍອດບັນຊີແລະໜັງສືແຈ້ງເຕືອນການເລີ່ມຕົ້ນຂອງການບໍລິການ, ລົງວັນທີພາຍໃນ 30 ວັນກ່ອນຫຼືວັນຄົບກຳນົດ 30 ວັນກ່ອນຫຼືຫຼັງຈາກການເລືອກຕັ້ງ; ໜັງສືແຈ້ງຍອດຄ່າທຳນຽມນັກສຶກສາໃນປັດຈຸບັນ; ສັນຍາເຊົ່າເຮືອນຖ້າຫາກວ່າຖືກຕ້ອງຈົນເຖິງວັນເລືອກຕັ້ງ ໃບບິວທີ່ໃຊ້ໄດ້ແມ່ນ: ຄ່າແກັສ, ຄ່າໄຟຟ້າ, ຄ່າຖິ້ມຂີ້ເຫຍື້ອ, ຄ່ານ້ຳ, ຄ່າລະບາຍນ້ຳເປື້ອນ, ຄ່າໂທລະສັບ, ຄ່າໂທລະສັບມືຖື, ຄ່າໂທລະທັດ, ຄ່າອິນເທີເນັດ, ຄ່າບັດເຄຣດິດ, ຫຼືຄ່າບໍລິການທະນາຄານ; ຫຼືໃບບິວຄ່າເຊົ່າຫຼືຄ່າຈຳນອງ

*ຫຼື*ຢ່າງໃດຢ່າງໜຶ່ງດັ່ງຕໍ່ລົງໄປນີ້:

- ໃບຮັບສີເຫຼືອງສະແດງໃບຂັບຂີ່ທີ່ຍັງບໍ່ໝົດອາຍຸຂອງລັດມິນນິໂຊຕາ, ບັດປະຈຳຕົວຂອງລັດມິນນິໂຊຕາ, ຫຼືໃບອະນຸຍາດທີ່ມີທີ່ຢູ່ປັດຈຸບັນຂອງທ່ານ
- ການຮັບຮອງ: ລາຍເຊັນຂອງຜູ້ລົງຄະແນນທີ່ຈົດທະບຽນແລ້ວທີ່ອາໄສຢູ່ໃນບໍລິເວນຂອງທ່ານແລະຮູ້ສ່ວນຕົວວ່າທ່ານອາໄສຢູ່ໃນບໍລິເວນນັ້ນ ຖ້າຫາກວ່າພະຍານຂອງທ່ານໄດ້ລົງທະບຽນເພື່ອລົງຄະແນນສຽງໃນບໍລິເວນນີ້ ພະຍານຂອງທ່ານສາມາດຮັບຮອງທ່ານໄດ້<br>*ບຸກຄົນນີ້ຈະຕ້ອງກອກແບບຟອມຮັບຮອງແລະເຊັນຊື່ທາງຫຼັງຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງໃຫ້ສົມບູນ*
- ບັດປະຈຳຕົວຊົນເຜົ່າທີ່ມີຊື່, ທີ່ຢູ່, ລາຍເຊັນ, ແລະຮູບພາບຂອງທ່ານຈາກບີໄອເອ
- "ໜັງສືແຈ້ງການຂອງການຈົດທະບຽນຊ້າ"ຖ້າຫາກວ່າທ່ານໄດ້ຮັບຈາກຜູ້ສອບບັນຊີຄາວຕີ້ ຫຼື ສະໝຽນເມືອງ
- ຖ້າວ່າທ່ານໄດ້ຍ້າຍພາຍໃນເຂດເລືອກຕັ້ງຂອງທ່ານຫຼືມີການປ່ຽນແປງຊື່ຂອງທ່ານ, ໃຫ້ໃຊ້ການຈົດທະບຽນໃນປັດຈຸບັນໃນເຂດເລືອກຕັ້ງ
- ການຮັບຮອງທີ່ຢູ່ອາໄສຂອງຜູ້ຢູ່ອາໄສໃນສະຖານທີ່ທີ່ຢູ່ອາໄສສະເພາະທີ່ໃດໜຶ່ງ: ລາຍເຊັນຂອງພະນັກງານຂອງສະຖານທີ່ຢູ່ອາໄສຂອງທ່ານລວມທັງສະຖານພະຍາບານຮັກສາຕົວ, ບ້ານກຸ່ມ, ທີ່ພັກອາໄສຂອງແມ່ຍິງທີ່ຖືກທຸບຕີ, ທີ່ພັກອາໄສຂອງຄົນບໍ່ມີບ້ານ, ແລະອື່ນໆຖ້າວ່າທ່ານບໍ່ແນ່ໃຈວ່າສະຖານທີ່ທີ່ຢູ່ອາໄສຂອງທ່ານໃຊ້ໄດ້ບໍ່ ໃຫ້ໂທຫາພະນັກງານເລືອກຕັ້ງທ້ອງຖິ່ນຂອງທ່ານ<br>*ພະນັກງານຈະຕ້ອງກອກແບບຟອມຮັບຮອງແລະເຊັນຊື່ທາງຫຼັງຄຳຮ້ອງສະໝັກລົງທະບຽນອອກສຽງເລືອກຕັ້ງໃຫ້ສົມບູນ*

---

# ການແກ້ໄຂຄວາມຜິດພາດ

- ຖ້າວ່າມີເວລາພໍ ໃຫ້ຂໍບັດລົງຄະແນນສຽງໃໝ່ຈາກພະນັກງານການເລືອກຕັ້ງຂອງທ່ານ ຫຼື
- ຂີດຂ້າຊື່ຂອງຜູ້ສະໝັກທີ່ທ່ານເລືອກຜິດອອກແລະໃສ່ເຄື່ອງໝາຍລົງຄະແນນສຽງຂອງທ່ານໃຫ້ຜູ້ສະໝັກທີ່ທ່ານຕ້ອງການ (ບໍ່ຕ້ອງໃສ່ຊື່ຫຍໍ້ຂອງທ່ານ)




---

# ຖ້າຫາກທ່ານມີຄວາມພິການ:

ຖ້າວ່າທ່ານມີຄວາມພິການຫຼືບໍ່ສາມາດໝາຍບັດຄະແນນຂອງທ່ານໄດ້ ພະຍານຂອງທ່ານສາມາດຊ່ວຍທ່ານໝາຍບັດລົງຄະແນນສຽງຂອງທ່ານຕາມການບອກຂອງທ່ານ ແລະສາມາດລວບລວມເອກກະສານ, ແລະກອກແບບຟອມໃຫ້ທ່ານໄດ້.

ຍາມທີ່ເຊັນຊື່ໃສ່ຊອງຈົດໝາຍ, ກົດໝາຍລັດມິນນິໂຊຕາລະບຸວ່າທ່ານສາມາດຈະ:

- ເຊັນຊື່ໃສ່ຊອງຈົດໝາຍສົ່ງກັບຄືນມາດ້ວຍ ຕົວທ່ານເອງ, ຫຼື
- ເຮັດເຄື່ອງໝາຍ, ຫຼື
- ຂໍໃຫ້ພະຍານຂອງທ່ານເຊັນຊື່ໃຫ້ທ່ານໂດຍຊ້ອງໜ້າທ່ານ (ໃຫ້ພະຍານຂອງທ່ານເຊັນຊື່ຂອງເຂົາເຈົ້າຄືກັນ)
- ຖ້າທ່ານໄດ້ໃຊ້ແນວຈ້ຳກາລາຍເຊັນເປັນລາຍເຊັນຂອງທ່ານ ທ່ານສາມາດໃຊ້ແນວຈ້ຳກາລາຍເຊັນຫຼືຮ້ອງຂໍໃຫ້ພະຍານຊ່ວຍໃຊ້ແນວຈ້ຳກາລາຍເຊັນຂອງທ່ານໂດຍຊ້ອງໜ້າທ່ານ

ກົດໝາຍມິນນິໂຊຕາພາກທີ 645.44 ພາກຍ່ອຍທີ 14

ກະລຸນາສັງເກດ: ການລົງຄະແນນສຽງແມ່ນບໍ່ໄດ້ລວມໃສ່ໃນໜັງສືມອບອຳນາດຂອງທະນາຍຄວາມ ບຸກຄົນທີ່ມີໜັງສືມອບອຳນາດຂອງທະນາຍຄວາມສາມາດເຊັນຊື່ໃຫ້ທ່ານໂດຍຊ້ອງໜ້າທ່ານເທົ່ານັ້ນ, ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ.

---

**ແຈ້ງການຮັກສາຄວາມລັບ :** ຖ້າວ່າບັດລົງຄະແນນຂອງທ່ານໄດ້ຍອມຮັບ ຊື່ແລະທີ່ຢູ່ຂອງທ່ານຈະເປັນຂໍ້ມູນສາທາລະນະນັບແຕ່ຍາມໄດ້ຮັບບັດລົງຄະແນນນັ້ນ ໃນເວລາທີ່ນຳໃຊ້ໃນການເລືອກຕັ້ງ, ທາງດ້ານການເມືອງ ຫຼືເພື່ອວັດຖຸປະສົງໃນການບັງຄັບໃຊ້ກົດໝາຍ ຖ້າບໍ່ດັ່ງນັ້ນ, ຂໍ້ມູນທີ່ທ່ານສະໜອງໃຫ້ໃນຊອງລາຍເຊັນຂອງທ່ານຈະໄດ້ຖືກຈຳກັດເກັບໄວ້ກັບພະນັກງານການເລືອກຕັ້ງຈົນເຖິງ 8 ໂມງແລງຂອງວັນເລືອກຕັ້ງ ຫຼັງຈາກເວລານັ້ນຊອງຈົດໝາຍຂອງທ່ານແລະຂໍ້ມູນທີ່ຢູ່ໃນນັ້ນ ຈະເປັນຂໍ້ມູນສາທາລະນະ ຍົກເວັ້ນໝາຍເລກປະຈຳຕົວຂອງທ່ານ ທ່ານຕ້ອງສະແດງເລກປະຈຳຕົວຂອງທ່ານເພື່ອເປັນການຮັບປະກັນວ່າບັດລົງຄະແນນທີ່ສົ່ງກັບຄືນມານັ້ນ ແມ່ນເປັນຂອງຜູ້ດຽວກັນກັບຜູ້ລົງຄະແນນທີ່ເປັນຜູ້ສະໝັກ ທ່ານສາມາດປະຕິເສດບໍ່ໃຫ້ໄດ້ ແຕ່ວ່າມັນອາດຈະນຳໄປສູ່ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານຖືກປະຕິເສດ ແລະຈະປ້ອງກັນບໍ່ໃຫ້ທ່ານສາມາດກວດສອບສະຖານະພາບບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານອອນລາຍໄດ້.